ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 017 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 22 OCT 2014

# ລະບຽບ
# ວ່າດ້ວຍການອອກຈຳໜ່າຍຮຸ້ນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຫຼັກຊັບ ສະບັບເລກທີ 013/ຄຄຊ, ລົງວັນທີ 17 ທັນວາ 2013;
- ອີງຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 1251/ສຄຄຊ, ລົງວັນທີ 08 ຕຸລາ 2014.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການອອກຈຳໜ່າຍຮຸ້ນ ຂອງບໍລິສັດ ຢູ່ ສປປ ລາວ ເພື່ອ ເພີ່ມທຶນ ຫຼື ລະດົມທຶນ, ປ່ຽນແປງໂຄງສ້າງການຖືຮຸ້ນ ແລະ ຈ່າຍຮຸ້ນເພື່ອປັນຜົນ ຫຼື ໃຫ້ເປັນລາງວັນ ແນໃສ່ຮັບປະກັນໃຫ້ແກ່ການອອກຈຳໜ່າຍຮຸ້ນ ມີຄວາມ ເປັນລະບຽບຮຽບຮ້ອຍ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

**ມາດຕາ 2 ອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນລະບຽບສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຮຸ້ນ** ໝາຍເຖິງ ຮຸ້ນສາມັນ ຫຼື ຮຸ້ນບູລິມະສິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;
2. **ບໍລິສັດອອກຈຳໜ່າຍຮຸ້ນ** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນການນຳເອົາຮຸ້ນຂອງຕົນອອກຈຳໜ່າຍໃຫ້ແກ່ຜູ້ລົງທຶນ;
3. **ທີ່ປຶກສາດ້ານການເງິນ** ໝາຍເຖິງ ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເປັນທີ່ປຶກສາດ້ານການເງິນ;
4. **ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ** ໝາຍເຖິງ ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ;
5. **ບໍລິສັດກວດສອບ** ໝາຍເຖິງ ບໍລິສັດ ທີ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ເປັນ ບໍລິສັດກວດສອບ ໃນຂົງເຂດວຽກງານຫຼັກຊັບ;
6. **ໜີ້ເກີນກຳນົດ** ໝາຍເຖິງ ໜີ້ ກັບບຸກຄົນ ແລະ ນິຕິບຸກຄົນ ທີ່ຄ້າງຊຳລະ ຕົ້ນທຶນ ຫຼື ດອກເບ້ຍ ສ່ວນໃດສ່ວນໜຶ່ງ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາກູ້ຢືມ;
7. **ລະບົບເປີດເຜີຍຂໍ້ມູນຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ** ໝາຍເຖິງ ລະບົບເປີດເຜີຍຂໍ້ມູນ ຜ່ານທາງເວັບໄຊທ໌ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
8. **ໃບຢັ້ງຢືນການຖືຄອງຮຸ້ນ** ໝາຍເຖິງ ໜັງສືຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ເພື່ອແຈ້ງໃຫ້ຜູ້ລົງທຶນ ຊາບກ່ຽວກັບ ຜົນການແບ່ງປັນຮຸ້ນ ຈາກການຈອງຊື້ຮຸ້ນຂອງຕົນ.

**ມາດຕາ 3 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ, ບໍລິສັດອອກຈຳໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນກ່ຽວຂ້ອງ ທີ່ມີສ່ວນຮ່ວມໃນການອອກຈຳໜ່າຍຮຸ້ນ ຢູ່ ສປປ ລາວ.

**ມາດຕາ 4 ຮູບແບບການອອກຈຳໜ່າຍຮຸ້ນ**

ການອອກຈຳໜ່າຍຮຸ້ນ ປະກອບດ້ວຍ ສາມ ຮູບແບບ ຄື: ການອອກຈຳໜ່າຍຮຸ້ນ ໃຫ້ແກ່ມວນຊົນ, ໃນວົງຈຳກັດ ແລະ ໃຫ້ແກ່ຜູ້ຖືຮຸ້ນເດີມ.

## ໝວດທີ 2
## ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

**ມາດຕາ 5 ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແມ່ນການອອກຈຳໜ່າຍຮຸ້ນ ຄັ້ງທຳອິດ ຫຼື ການອອກເພີ່ມ ທີ່ມີການໂຄສະນາຜ່ານພາຫະນະສື່ມວນຊົນໃນວົງກວ້າງ, ບໍ່ມີການກຳນົດປະເພດ ຫຼື ກຸ່ມຜູ້ລົງທຶນສະເພາະໃດໜຶ່ງ ຊຶ່ງມີຜູ້ລົງທຶນຫຼາຍກວ່າ ໜຶ່ງຮ້ອຍ ຂຶ້ນໄປ.

**ມາດຕາ 6 ເງື່ອນໄຂການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດ ມະຫາຊົນ;
2. ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວຢ່າງໜ້ອຍ ສາມປີ ຍົກເວັ້ນກໍລະນີ ບໍລິສັດ ມີການແຍກ, ຄວບ ຫຼື ທັບ ເປັນ ບໍລິສັດຮູບແບບໃໝ່ຈາກບໍລິສັດເດີມທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢ່າງໜ້ອຍ ສາມ ປີ;
3. ມີສະພາບໍລິຫານ ທີ່ປະກອບດ້ວຍ ສະມາຊິກອິດສະຫຼະຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງຈຳນວນ ສະມາຊິກສະພາບໍລິຫານທັງໝົດ ທີ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນ;
4. ມີຄະນະກຳມະການກວດກາພາຍໃນ ທີ່ປະກອບດ້ວຍ ສະມາຊິກທັງໝົດຢ່າງໜ້ອຍ ສາມທ່ານ ທີ່ໄດ້ຮັບການແຕ່ງຕັ້ງຈາກສະພາບໍລິຫານ ໃນນັ້ນ ສອງສ່ວນສາມ ຕ້ອງເປັນສະມາຊິກອິດສະຫຼະ ຊຶ່ງຢ່າງໜ້ອຍ ໜຶ່ງທ່ານ ຕ້ອງມີຄວາມຮູ້ຄວາມສາມາດ ທາງດ້ານບັນຊີ ຫຼື ການເງິນ;
5. ມີແຜນການລະດົມທຶນ ແລະ ແຜນການນຳໃຊ້ທຶນທີ່ລະດົມໄດ້ ໂດຍຜ່ານການຮັບຮອງຈາກກອງ ປະຊຸມຜູ້ຖືຮຸ້ນ;
6. ມີເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບ ການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ ແລະ ເອກະສານລາຍງານການເງິນ ປີສຸດທ້າຍ ກ່ອນວັນຍື່ນຄຳຮ້ອງ ແລະ ເອກະສານປະກອບ ການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງໄດ້ຮັບຄຳເຫັນແບບບໍ່ມີເງື່ອນໄຂ ຫຼື ແບບມີເງື່ອນໄຂ ທີ່ບໍ່ແມ່ນເງື່ອນໄຂສຳຄັນ ຊຶ່ງກະທົບ ຕໍ່ຜົນການດຳເນີນງານ ແລະ ຖານະການເງິນຂອງບໍລິສັດ;
7. ບໍ່ມີການປ່ຽນແປງປະເພດການດຳເນີນທຸລະກິດຕົ້ນຕໍໃນໄລຍະ ສາມປີ ຜ່ານມາ;
8. ມີລາຍຮັບປີສຸດທ້າຍ ກ່ອນມື້ຍື່ນເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນ ຊົນ ບໍ່ຫຼຸດໜຶ່ງຕື້ກີບ, ບໍ່ມີຂາດທຶນສະສົມ, ການດຳເນີນທຸລະກິດໃນ ໜຶ່ງ ປີຜ່ານມາມີກຳໄລ ສຸດທິ ແລະ ບໍ່ມີໜີ້ເກີນກຳນົດ ຊຶ່ງຄ້າງຊຳລະຕົ້ນທຶນ ຫຼື ດອກເບ້ຍ ສ່ວນໃດສ່ວນໜຶ່ງ ຫຼື ທັງ ໝົດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາກູ້ຢືມ;
9. ມີການຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກທີ່ປຶກສາດ້ານການເງິນ ພ້ອມດ້ວຍລາຍຊື່ທີມງານທີ່ຮັບຜິດຊອບເປັນທີ່ປຶກສາດ້ານການເງິນ;
10. ມີການຄ້ຳປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ລະຫວ່າງ ບໍລິສັດທີ່ມີຈຸດປະສົງອອກ ຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ກັບ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ;
11. ມີແຜນການກ່ຽວກັບ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ, ການເຄື່ອນໄຫວທຸລະກິດ ແລະ ການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມປີ ຕໍ່ໜ້າ ນັບແຕ່ປີສຳເລັດການອອກຈຳໜ່າຍຮຸ້ນ ໃຫ້ແກ່ມວນຊົນ ເປັນຕົ້ນໄປ ໂດຍຜ່ານການຮັບຮອງຈາກສະພາບໍລິຫານ;
12. ມີເງື່ອນໄຂອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 7 ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄຳຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາໃບທະບຽນສຳປະທານ ກໍລະນີເປັນທຸລະກິດສຳປະທານ;
3. ສຳເນົາໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ;
4. ສຳເນົາກົດລະບຽບຂອງບໍລິສັດ ແລະ ບໍລິສັດໃນກຸ່ມ (ຖ້າມີ);
5. ມະຕິກອງປະຊຸມຜູ້ຖືຮຸ້ນ ທີ່ຮັບຮອງກ່ຽວກັບ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ;
6. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ໜຶ່ງສ່ວນຮ້ອຍຂຶ້ນໄປ;
7. ລາຍຊື່ ແລະ ຊີວະປະຫວັດຫຍໍ້ຂອງ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະອຳນວຍການ ຂອງບໍລິສັດ ແລະ ບໍລິສັດໃນກຸ່ມ (ຖ້າມີ);
8. ໃບຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກ ທີ່ປຶກສາດ້ານການເງິນ;
9. ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ;
10. ແຜນການກ່ຽວກັບ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ, ການເຄື່ອນໄຫວທຸລະກິດ ແລະ ການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມປີ ຕໍ່ໜ້າ;
11. ໜັງສືຊວນຊື້;
12. ສັນຍາຄໍ້າປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ລະຫວ່າງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ກັບ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນ;
13. ຄຳເຫັນຂອງ ຄະນະກຳມະການກວດກາພາຍໃນ ກ່ຽວກັບການບໍລິຫານງານຂອງບໍລິສັດ ໃນໄລຍະຜ່ານມາ;
14. ໃບຢັ້ງຢືນຈາກສານປະຊາຊົນ (ໃບແຈ້ງໂທດສຳລັບນິຕິບຸກຄົນ);
15. ເອກະສານອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນໃນແຕ່ລະຄັ້ງ, ຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງ ເກັບຮັກສາເອກະສານປະຕິບັດງານ ທີ່ກ່ຽວຂ້ອງດັ່ງກ່າວ ໄວ້ຢ່າງໜ້ອຍ ສິບປີ.

**ມາດຕາ 8 ເອກະສານລາຍງານການເງິນ**

ເອກະສານລາຍງານການເງິນ ຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ປະກອບດ້ວຍ ໃບສະຫຼຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດລວມ, ໃບລາຍງານສ່ວນປ່ຽນ

ແປງຂອງທຶນຕົນເອງ ແລະ ບົດອະທິບາຍກ່ຽວກັບຫຼັກການ, ວິທີການດ້ານການບັນຊີທີ່ໄດ້ນຳໃຊ້ ແລະ ອື່ນໆ. ເອກະສານລາຍງານການເງິນຕ້ອງຜ່ານການກວດສອບຈາກ ບໍລິສັດກວດສອບ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຫາກເປັນກຸ່ມບໍລິສັດ ເອກະສານລາຍງານການເງິນນັ້ນ ຕ້ອງສະແດງໃຫ້ເຫັນຂໍ້ມູນທາງການເງິນແບບແຍກກິດຈະການ ແລະ ລວມກິດຈະການ.

ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ທີ່ໃຊ້ປະກອບເຂົ້າໃນເອກະສານ ການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງສ້າງຂຶ້ນຕາມມາດຕະຖານການບັນຊີ ແລະ ມາດຕະຖານການລາຍງານດຽວກັນ ຕາມລະບຽບການທີ່ກ່ຽວຂ້ອງທີ່ປະກາດໃຊ້ໃນແຕ່ລະໄລຍະ.

ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ມີ ການແຍກ, ຄວບ ຫຼື ທັບ ເປັນບໍລິສັດຮູບແບບໃໝ່ ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ຕ້ອງສ້າງຂຶ້ນໃນຮູບແບບເອກະສານລາຍງານການເງິນສົມມຸດຖານ.

ກໍລະນີ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍຫຼັງວັນທີ 30 ມິຖຸນາ ຕ້ອງປະກອບມີ ເອກະສານລາຍງານການເງິນ ປະຈຳຫົກເດືອນ ຕົ້ນປີ ຂອງປີທີ່ຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໂດຍຜ່ານການທົບທວນ ຈາກບໍລິສັດກວດສອບ.

ກໍລະນີ ມີເຫດການສຳຄັນເກີດຂຶ້ນ ພາຍຫຼັງວັນທ້າຍງວດ ຂອງເອກະສານລາຍງານການເງິນ ສະບັບຫຼ້າສຸດທີ່ຍື່ນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບເຫດການດັ່ງກ່າວເພີ່ມເຕີມ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພ້ອມທັງເປີດເຜີຍໃນໜັງສືຊວນຊື້.

**ມາດຕາ 9 ໜັງສືຊວນຊື້**

ໜັງສືຊວນຊື້ສຳລັບ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນກ່ຽວກັບ ບໍລິສັດ ເປັນຕົ້ນ ປັດໄຈຄວາມສ່ຽງ, ປະຫວັດການສ້າງຕັ້ງ ແລະ ການເຄື່ອນໄຫວຂອງທຸລະກິດ;
2. ຂໍ້ມູນກ່ຽວກັບ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະອຳນວຍການ;
3. ຂໍ້ມູນກ່ຽວກັບ ຮຸ້ນ ເປັນຕົ້ນ ວິທີການສະເໜີຂາຍ, ຈຳນວນ, ມູນຄ່າກຳນົດ, ລາຄາອອກຈຳໜ່າຍ, ການກຳນົດລາຄາອອກຈຳໜ່າຍ, ໄລຍະເວລາອອກຈຳໜ່າຍຮຸ້ນທີ່ຄາດຄະເນໄວ້, ວິທີການຈອງຊື້, ການແບ່ງປັນ, ການສົ່ງມອບ ແລະ ເງື່ອນໄຂໃນການໂອນຮຸ້ນ;
4. ຂໍ້ມູນກ່ຽວກັບ ຊື່ ແລະ ທີ່ຢູ່ ຂອງບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບໍລິສັດທີ່ປຶກສາທາງດ້ານກົດໝາຍ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ;
5. ຂໍ້ມູນກ່ຽວກັບ ແຜນການນຳໃຊ້ທຶນທີ່ລະດົມໄດ້ ແລະ ແຜນການເຄື່ອນໄຫວທຸລະກິດ;
6. ຂໍ້ມູນກ່ຽວກັບ ບັນຊີລາຍຊື່ຜູ້ມີອຳນາດຄວບຄຸມ;
7. ຂໍ້ມູນກ່ຽວກັບ ຂໍ້ຂັດແຍ່ງທາງດ້ານກົດໝາຍ ແລະ ລາຍການທີ່ກ່ຽວພັນ;

8. ຂໍ້ມູນກ່ຽວກັບ ຖານະການເງິນ ຂອງບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຕ້ອງເປັນຂໍ້ມູນດຽວກັນກັບຂໍ້ມູນຂອງເອກະສານລາຍງານການເງິນ ທີ່ໄດ້ຮັບການກວດສອບຈາກບໍລິສັດກວດສອບ.

ເນື້ອໃນຂອງໜັງສືຊວນຊື້ ຕ້ອງສ້າງຂຶ້ນບົນພື້ນຖານຂໍ້ມູນທີ່ ຄົບຖ້ວນ ແລະ ຖືກຕ້ອງ ພ້ອມທັງມີລາຍເຊັນຮັບຮອງຂອງ ປະທານສະພາບໍລິຫານ, ຜູ້ອໍານວຍການໃຫຍ່, ຝ່າຍກວດກາ, ຝ່າຍບັນຊີ ຂອງບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນ, ທີ່ປຶກສາດ້ານການເງິນ ແລະ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ.

## ມາດຕາ 10 ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ

ການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ແຕ່ລະຄັ້ງ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງເຮັດສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ກັບ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ.

ກໍລະນີ ມີຫຼາຍບໍລິສັດຫຼັກຊັບ ຮ່ວມກັນຄໍ້າປະກັນການອອກຈໍາໜ່າຍຮຸ້ນ ຕ້ອງມອບໃຫ້ບໍລິສັດຫຼັກຊັບໃດໜຶ່ງ ເປັນຜູ້ຕາງໜ້າເຮັດສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນ ກັບ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ.

ການຄໍ້າປະກັນການອອກຈໍາໜ່າຍຮຸ້ນ ສາມາດເຮັດໄດ້ດ້ວຍຫຼາຍຮູບແບບ ເປັນຕົ້ນແມ່ນ ການຊ່ວຍຈໍາໜ່າຍ ຫຼື ຮັບຊື້ຮຸ້ນ ບາງສ່ວນ ຫຼື ທັງໝົດ ຈາກບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ເພື່ອຮັບປະກັນຜົນສໍາເລັດຂອງການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ.

ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່, ທີ່ຢູ່ ສໍານັກງານໃຫຍ່ ແລະ ຜູ້ຕາງໜ້າທາງດ້ານກົດໝາຍ ຂອງບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ (ຝ່າຍໄດ້ຮັບການຄໍ້າປະກັນ) ແລະ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ (ຝ່າຍໃຫ້ການຄໍ້າປະກັນ);
2. ຈໍານວນ, ປະເພດ, ມູນຄ່າລວມ ຂອງຮຸ້ນທີ່ໄດ້ຮັບການຄໍ້າປະກັນ ແລະ ລາຄາຮຸ້ນທີ່ຈະອອກຈໍາໜ່າຍ;
3. ໄລຍະເວລາການອອກຈໍາໜ່າຍຮຸ້ນທີ່ຄາດຄະເນໄວ້;
4. ເງື່ອນໄຂ ແລະ ຮູບແບບ ໃນການຄໍ້າປະກັນການອອກຈໍາໜ່າຍຮຸ້ນ;
5. ສິດ ແລະ ພັນທະ ຂອງບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ;
6. ຄ່າທໍານຽມ ແລະ ເງື່ອນໄຂໃນການຊໍາລະຄ່າທໍານຽມ;
7. ການຍົກເລີກສັນຍາ, ການແກ້ໄຂຂໍ້ຂັດແຍ່ງ ແລະ ການປັບໃໝ.

## ມາດຕາ 11 ການພິຈາລະນາການຮ້ອງຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ

ເມື່ອໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບ ການຮ້ອງຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຮ້ອງຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ມວນຊົນ ພາຍໃນກໍານົດເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງ ແລະ ເອກະສານປະກອບ ເປັນຕົ້ນໄປ. ໃນກໍລະນີ ຫາກປະຕິເສດ ກໍຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງ ເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ລວມທັງເອກະສານຢັ້ງຢືນການກວດສອບຈາກບໍລິສັດກວດສອບ, ມີສິດເຊີນ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ, ທີ່ປຶກສາດ້ານການເງິນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ມາປຶກສາຫາລື ພ້ອມດຽວກັນນັ້ນ ກໍ່ມີສິດໃນການລົງຢ້ຽມຊົມກິດຈະການ ຫຼື ເກັບກຳຂໍ້ມູນກ່ຽວກັບບໍລິສັດ ແລະ ພາກສ່ວນດັ່ງກ່າວ ຕ້ອງອຳນວຍຄວາມສະດວກໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ມາດຕາ 12 ການເປີດເຜີຍຂໍ້ມູນກ່ຽວກັບແຜນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

ພາຍຫຼັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຢ່າງຄົບຖ້ວນ ແລະ ຖືກຕ້ອງແລ້ວ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສາມາດເປີດເຜີຍຂໍ້ມູນກ່ຽວກັບການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຊຶ່ງບໍ່ອະນຸຍາດໃຫ້ເປີດເຜີຍຂໍ້ມູນກ່ຽວກັບ ລາຄາອອກຈຳໜ່າຍ, ໄລຍະເວລາອອກຈຳໜ່າຍຮຸ້ນທີ່ຄາດຄະເນໄວ້ ຫຼື ຂໍ້ມູນອື່ນທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍ່ອະນຸຍາດໃຫ້ເປີດເຜີຍ.

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບ ແຜນການເປີດເຜີຍຂໍ້ມູນຜ່ານພາຫະນະສື່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບລ່ວງໜ້າຢ່າງໜ້ອຍໜຶ່ງວັນລັດຖະການ ກ່ອນວັນເປີດເຜີຍຂໍ້ມູນດັ່ງກ່າວ.

## ມາດຕາ 13 ຄ່າທຳນຽມການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງເສຍຄ່າທຳນຽມ ດັ່ງນີ້:

1. ຄ່າຍື່ນຄຳຮ້ອງ ແລະ ເອກະສານປະການກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈຳນວນ ສິບຫ້າລ້ານກີບ (15.000.000 ກີບ) ແລະ ຕ້ອງຊຳລະພາຍໃນວັນທີ່ໄດ້ຍື່ນຄຳຮ້ອງດັ່ງກ່າວ;
2. ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈຳນວນ ສູນຈຸດສູນສາມສ່ວນຮ້ອຍ (0,03%) ຂອງມູນຄ່າຮຸ້ນທີ່ຮ້ອງຂໍອອກຈຳໜ່າຍ ແຕ່ບໍ່ໃຫ້ຕ່ຳກວ່າ ສາມສິບລ້ານກີບ (30.000.000 ກີບ) ແລະ ຕ້ອງຊຳລະພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຕົ້ນໄປ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນ ສິບລ້ານກີບ (10.000.000 ກີບ) ແລະ ຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງທຸກໆປີ ຍົກເວັ້ນປີທີ່ອອກຈຳໜ່າຍຮຸ້ນຄັ້ງທຳອິດ.

## ມາດຕາ 14 ຂັ້ນຕອນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

ພາຍຫຼັງໄດ້ຮັບອະນຸຍາດ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ປະກາດກ່ຽວກັບການອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ;
2. ກຳນົດລາຄາຂອງຮຸ້ນທີ່ຈະອອກຈຳໜ່າຍໃຫ້ແກ່ມວນຊົນ;

3. ໂຄສະນາອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ;
4. ຈອງຊື້ຮຸ້ນ ແລະ ວາງເງິນມັດຈຳ;
5. ແບ່ງປັນຮຸ້ນ;
6. ຊຳລະເງິນ ຫຼື ສົ່ງເງິນມັດຈຳຄືນ ໃນກໍລະນີຜູ້ຈອງຊື້ຮຸ້ນບໍ່ໄດ້ຮັບການແບ່ງປັນຮຸ້ນ ຕາມຈຳນວນຮຸ້ນທີ່ຈອງຊື້;
7. ອອກໃບຢັ້ງຢືນການຖືຄອງຮຸ້ນໃຫ້ແກ່ຜູ້ຊື້ຮຸ້ນ.

ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນເປັນຕົ້ນໄປ. ກໍລະນີ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ບໍ່ສຳເລັດຕາມກຳນົດເວລາດັ່ງກ່າວ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສາມາດສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອເພີ່ມເວລາອອກຈຳໜ່າຍຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນ ສາມສິບວັນ ແລະ ຕ້ອງສະເໜີມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ ສາມວັນ ລັດຖະການ ກ່ອນວັນສິ້ນສຸດກຳນົດເວລາດັ່ງກ່າວ.

### ມາດຕາ 15 ການປະກາດກ່ຽວກັບການອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

ພາຍຫຼັງໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະກາດກ່ຽວກັບການໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນດັ່ງກ່າວ ໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນຢ່າງໜ້ອຍ ຫ້າວັນລັດຖະການ ຕໍ່ເນື່ອງ ພ້ອມທັງມີການເຜີຍແຜ່ຮ່າງໜັງສືຊວນຊື້ທີ່ຍັງບໍ່ທັນໄດ້ກຳນົດກ່ຽວກັບ ລາຄາອອກຈຳໜ່າຍ, ຈຳນວນ ແລະ ວັນທີອອກຈຳໜ່າຍ ຜ່ານທາງລະບົບເປີດເຜີຍຂໍ້ມູນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນໄລຍະເວລາຢ່າງໜ້ອຍ ສິບສີ່ວັນ ຕໍ່ເນື່ອງ ກ່ອນວັນເປີດການຈອງຊື້ຮຸ້ນຢ່າງໜ້ອຍ ສິບວັນລັດຖະການ.

### ມາດຕາ 16 ການກຳນົດລາຄາຂອງຮຸ້ນທີ່ຈະອອກຈຳໜ່າຍໃຫ້ແກ່ມວນຊົນ

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນ ດຳເນີນການກຳນົດລາຄາຂອງຮຸ້ນທີ່ຈະອອກຈຳໜ່າຍໃຫ້ແກ່ມວນຊົນ ໃຫ້ສຳເລັດພາຍໃນກຳນົດເວລາ ຫົກສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ.

ການກຳນົດລາຄາຂອງຮຸ້ນທີ່ຈະອອກຈຳໜ່າຍໃຫ້ແກ່ມວນຊົນ ສາມາດກຳນົດລາຄາຮຸ້ນ ແບບຄົງທີ່ (Fixed-price method) ຫຼື ສາມາດກຳນົດລາຄາຮຸ້ນ ແບບການດຳເນີນການສຳຫຼວດຄວາມຕ້ອງການຊື້ຮຸ້ນ (Bookbuilding) ຫຼື ວິທີອື່ນ ທີ່ໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງ ສຳເລັດການກຳນົດລາຄາ ແລະ ໄລຍະເວລາເປີດການຈອງຊື້ຮຸ້ນ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບການກຳນົດລາຄາ ແລະ ໄລຍະເວລາເປີດການຈອງຊື້ຮຸ້ນ ຢ່າງເປັນລາຍລັກອັກສອນ ພ້ອມທັງສົ່ງໜັງສືຊວນຊື້ສະບັບສົມບູນ ແລະ ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອອະນຸຍາດໃຫ້ເປີດການຈອງຊື້ຮຸ້ນ.

**ມາດຕາ 17 ການໂຄສະນາອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ**

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງເຜີຍແຜ່ໜັງສືຊວນຊື້ຂອງຕົນໃຫ້ແກ່ມວນຊົນ ຜ່ານລະບົບເປີດເຜີຍຂໍ້ມູນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ດຳເນີນການໂຄສະນາອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າວັນຕໍ່ເນື່ອງ ກ່ອນວັນເປີດການຈອງຊື້ຮຸ້ນ.

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບແຜນການໂຄສະນາອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຜ່ານພາຫະນະສື່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ລ່ວງໜ້າຢ່າງໜ້ອຍ ໜຶ່ງວັນລັດຖະການ ກ່ອນວັນເລີ່ມໂຄສະນາ.

**ມາດຕາ 18 ການຈອງຊື້ຮຸ້ນ ແລະ ວາງເງິນມັດຈຳ**

ການຈອງຊື້ຮຸ້ນ ຕ້ອງດຳເນີນຜ່ານລະບົບ ແລະ ວິທີການ ທີ່ໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງແຈກຢາຍໃບຈອງຊື້ຮຸ້ນ ໃຫ້ແກ່ຜູ້ລົງທຶນ ທີ່ສົນໃຈຊື້ຮຸ້ນ ພ້ອມດ້ວຍ ໜັງສືຊວນຊື້ ໃນຮູບແບບຂອງສຳເນົາເອກະສານ ຫຼື ໃນຮູບແບບເອເລັກໂຕຣນິກ ຍົກເວັ້ນ ກໍລະນີທີ່ ຜູ້ລົງທຶນ ໄດ້ສະແດງເຈດຈຳນົງ ທີ່ຈະບໍ່ຮັບເອົາໜັງສືຊວນຊື້ດັ່ງກ່າວ.

ເວລາເປີດການຈອງຊື້ຮຸ້ນ ຜູ້ລົງທຶນ ຕ້ອງໂອນເງິນມັດຈຳໃຫ້ຄົບຖ້ວນ ຕາມມູນຄ່າຮຸ້ນທີ່ຕົນສັ່ງຈອງເຂົ້າໃນ ບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນ ຂອງຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ທີ່ເປີດຢູ່ໃນທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ ພ້ອມທັງແຈ້ງຜົນກ່ຽວກັບການໂອນເງິນມັດຈຳໃຫ້ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຊາບ.

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງລາຍງານຜົນການຈອງຊື້ຮຸ້ນປະຈຳວັນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບພາຍໃນ ໜຶ່ງວັນລັດຖະການ ຖັດມາ.

ໃນໄລຍະເວລາເປີດການຈອງຊື້ຮຸ້ນ ຜູ້ລົງທຶນໃດ ທີ່ໄດ້ສຳເລັດການຈອງຊື້ຮຸ້ນ ແລະ ວາງເງິນມັດຈຳແລ້ວ ແມ່ນບໍ່ສາມາດຍົກເລີກການຈອງຊື້ຮຸ້ນຂອງຕົນໄດ້ ຍົກເວັ້ນກໍລະນີ ໄດ້ຕົກລົງໄວ້ເປັນຢ່າງອື່ນ.

**ມາດຕາ 19 ການແບ່ງປັນຮຸ້ນ**

ພາຍຫຼັງຜູ້ລົງທຶນສຳເລັດການຈອງຊື້ຮຸ້ນ ແລະ ໂອນເງິນມັດຈຳ ເຂົ້າໃນບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງດຳເນີນການແບ່ງປັນຮຸ້ນໃຫ້ຜູ້ລົງທຶນທີ່ໄດ້ຈອງຊື້ຮຸ້ນ ຕາມວິທີການແບ່ງປັນຮຸ້ນ ທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຊຶ່ງໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 20 ການຊຳລະເງິນ ຫຼື ສົ່ງເງິນມັດຈຳຄືນ**

ກໍລະນີ ຜູ້ລົງທຶນທີ່ຈອງຊື້ຮຸ້ນນັ້ນ ບໍ່ໄດ້ຮັບການແບ່ງປັນຮຸ້ນ ຕາມຈຳນວນທີ່ຕົນຈອງຊື້ ທັງໝົດ ຫຼື ບາງສ່ວນ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງສົ່ງເງິນມັດຈຳທັງໝົດ ຫຼື ສ່ວນທີ່ຍັງເຫຼືອ ຄືນໃຫ້ແກ່ຜູ້

ລົງທຶນທີ່ຈອງຊື້ຮຸ້ນ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນ ເປັນຕົ້ນໄປ.

ກໍລະນີ ກາຍກຳນົດເວລາດັ່ງກ່າວ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງຮັບຜິດຊອບກ່ຽວກັບການສົ່ງເງິນມັດຈຳຄືນ ທັງໝົດ ຫຼື ສ່ວນທີ່ຍັງເຫຼືອ ຄືນໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ ພ້ອມດ້ວຍດອກເບ້ຍ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງທະນາຄານຕົວແທນຂອງ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ໃນໄລຍະນັ້ນ.

ພາຍຫຼັງສຳເລັດຂັ້ນຕອນ ການຊຳລະເງິນ ຫຼື ສົ່ງເງິນມັດຈຳຄືນ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນຕ້ອງໂອນເງິນທີ່ລະດົມໄດ້ຈາກ ບັນຊີເງິນສະເພາະສຳລັບການເປີດຈອງຊື້ຮຸ້ນ ເຂົ້າໃນ ບັນຊີເງິນສະເພາະສຳລັບທຶນທີ່ລະດົມໄດ້ ຂອງບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ທີ່ເປີດຢູ່ໃນທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ.

### ມາດຕາ 21 ການອອກໃບຢັ້ງຢືນການຖືຄອງຮຸ້ນ

ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງອອກໃບຢັ້ງຢືນການຖືຄອງຮຸ້ນ ໃຫ້ແກ່ຜູ້ຊື້ຮຸ້ນ ພາຍໃນກຳນົດເວລາ ສິບວັນລັດຖະການ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຕົ້ນໄປ ເພື່ອຢັ້ງຢືນກ່ຽວກັບຈຳນວນຮຸ້ນ ທີ່ຜູ້ຊື້ຮຸ້ນໄດ້ຮັບຫຼັງການແບ່ງປັນ.

ໃບຢັ້ງຢືນການຖືຄອງຮຸ້ນ ປະກອບດ້ວຍ ຂໍ້ມູນພື້ນຖານ ດັ່ງນີ້:

1. ຊື່ ແລະ ທີ່ຢູ່ຂອງ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ;
2. ຊື່, ທີ່ຢູ່ ແລະ ສັນຊາດ ຂອງຜູ້ຊື້ຮຸ້ນ;
3. ໝາຍເລກປະຈຳຕົວສຳລັບຜູ້ຊື້ຮຸ້ນ (ໝາຍເລກປະຈຳຕົວຜູ້ລົງທຶນ) ກໍລະນີ ເປັນຜູ້ລົງທຶນຕ່າງປະເທດ;
4. ເລກບັນຊີຂອງຜູ້ຊື້ຮຸ້ນ;
5. ຈຳນວນຮຸ້ນ ທີ່ຈອງຊື້ທັງໝົດ ແລະ ທີ່ໄດ້ຮັບການແບ່ງປັນ, ມູນຄ່າກຳນົດ ແລະ ລາຄາຮຸ້ນທີ່ອອກຈຳໜ່າຍ, ມູນຄ່າລວມຂອງຮຸ້ນທີ່ຈອງຊື້, ມູນຄ່າລວມຂອງຮຸ້ນທີ່ໄດ້ຮັບການແບ່ງປັນ ແລະ ຈຳນວນເງິນມັດຈຳທີ່ສົ່ງຄືນ;
6. ວັນທີ ອອກໃບຢັ້ງຢືນການຖືຄອງຮຸ້ນ;
7. ລາຍເຊັນ ແລະ ຕາປະທັບ ຂອງ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ.

ກໍລະນີ ມີຫຼາຍບໍລິສັດຫຼັກຊັບ ຮ່ວມກັນຄ້ຳປະກັນການອອກຈຳໜ່າຍຮຸ້ນ ຕ້ອງມອບໃຫ້ບໍລິສັດຫຼັກຊັບໃດໜຶ່ງ ທີ່ເປັນຜູ້ຕາງໜ້າເຮັດສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ ກັບ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຜູ້ຮັບຜິດຊອບໃນການອອກໃບຢັ້ງຢືນການຖືຄອງຮຸ້ນ ໃຫ້ແກ່ຜູ້ຊື້ຮຸ້ນ.

### ມາດຕາ 22 ການລາຍງານຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຕົ້ນໄປ ຕາມການກຳນົດຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕາ 23 ການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບການລາຍງານ ຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງລະບຽບສະບັບນີ້.

ກໍລະນີ ຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຫາກຕ່ຳກວ່າ ແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ອອກຈຳໜ່າຍທັງໝົດ ຖືວ່າການອອກຈຳໜ່າຍຮຸ້ນດັ່ງກ່າວບໍ່ສຳເລັດ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງສົ່ງເງິນຄືນໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ ພາຍໃນກຳນົດເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບການຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຕົ້ນໄປ. ກໍລະນີ ບໍ່ສາມາດສົ່ງເງິນຄືນຕາມໄລຍະເວລາດັ່ງກ່າວ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງຮັບຜິດຊອບສົ່ງເງິນຄືນທັງໝົດ ໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ ພ້ອມດ້ວຍດອກເບ້ຍ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງທະນາຄານຕົວແທນຂອງ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ໃນໄລຍະນັ້ນ.

ມາດຕາ 24 ການນຳໃຊ້ທຶນທີ່ລະດົມໄດ້

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈະສາມາດນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ກໍຕໍ່ເມື່ອສຳເລັດການຂຶ້ນທະບຽນເພີ່ມທຶນ ກັບກະຊວງອຸດສາຫະກຳ ແລະ ການຄ້າ. ກໍລະນີ ອອກຈຳໜ່າຍຮຸ້ນເພື່ອປັບປຸງໂຄງສ້າງການຖືຮຸ້ນ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈະສາມາດນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ກໍຕໍ່ເມື່ອໄດ້ຮັບການຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນດັ່ງກ່າວ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕາ 25 ການລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້

ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ຈາກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດໄຕມາດ ເປັນຕົ້ນໄປ ຈົນກວ່າຈະນຳໃຊ້ທຶນດັ່ງກ່າວໝົດ.

ມາດຕາ 26 ການໂຈະການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດສັ່ງໂຈະການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນເວລາສູງສຸດ ຫົກສິບວັນ ໃນກໍລະນີ ການສະໜອງຂໍ້ມູນບໍ່ຖືກຕ້ອງ ຫຼື ບໍ່ປະຕິບັດຕາມຂັ້ນຕອນຂອງການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງລະບຽບສະບັບນີ້ ທີ່ສົ່ງ ຫຼື ອາດຈະສົ່ງຜົນເສຍຫາຍຕໍ່ຜູ້ລົງທຶນ .

ກໍລະນີ ຖືກສັ່ງໂຈະ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະກາດກ່ຽວກັບການຖືກສັ່ງໂຈະດັ່ງກ່າວໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ພາຍໃນກຳນົດເວລາ ຫ້າວັນ ລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການໂຈະການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ແລະ ຮັບຖອນການຈອງຊື້ຮຸ້ນ ກໍລະນີ ມີການສະເໜີຂໍໃຫ້ຍົກເລີກການຈອງຊື້ຮຸ້ນຈາກຜູ້ລົງທຶນ ທີ່ໄດ້ຈອງຊື້ຮຸ້ນກັບຕົນ ພ້ອມທັງສົ່ງເງິນຄືນໃຫ້ຜູ້ລົງທຶນທີ່ຈອງຊື້ຮຸ້ນດັ່ງກ່າວ ໃຫ້ຄົບຖ້ວນ

ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບການສະເໜີ ເປັນຕົ້ນໄປ. ກໍລະນີ ກາຍກຳນົດເວລາສົ່ງເງິນຄືນດັ່ງກ່າວ ແຕ່ບໍ່ສາມາດສົ່ງເງິນມັດຈຳຄືນ ທັງໝົດ ຫຼື ສ່ວນທີ່ຍັງເຫຼືອ ໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງຮັບຜິດຊອບສົ່ງເງິນມັດຈຳຄືນ ທັງໝົດ ຫຼື ສ່ວນທີ່ຍັງເຫຼືອ ໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ ພ້ອມດ້ວຍດອກເບ້ຍ ຕາມອັດຕາດອກເບ້ຍເງິນຝາກປະຢັດຂອງທະນາຄານຕົວແທນຂອງ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ໃນໄລຍະນັ້ນ.

ພາຍຫຼັງ ສາມາດແກ້ໄຂສາເຫດຂອງການສັ່ງໂຈະໄດ້ແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງອອກແຈ້ງການຍົກເລີກການສັ່ງໂຈະດັ່ງກ່າວ ແລະ ອະນຸຍາດໃຫ້ສາມາດດຳເນີນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕໍ່ໄປໄດ້. ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະກາດກ່ຽວກັບແຈ້ງການຍົກເລີກການສັ່ງໂຈະ ໃຫ້ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ເປັນເວລາຢ່າງໜ້ອຍ ຫ້າວັນ ລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການຍົກເລີກການສັ່ງໂຈະ ເປັນຕົ້ນໄປ.

## ມາດຕາ 27 ການຍົກເລີກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດຍົກເລີກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ໃນກໍລະນີ ດັ່ງຕໍ່ໄປນີ້:

1. ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ບໍ່ສາມາດແກ້ໄຂສາເຫດທີ່ຖືກສັ່ງໂຈະໄດ້ ພາຍໃນກຳນົດເວລາ ຫົກສິບວັນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 26 ຂອງລະບຽບສະບັບນີ້;
2. ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສະເໜີຍົກເລີກການອອກຈຳໜ່າຍຮຸ້ນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ;
3. ຕາມຄຳສັ່ງ ຫຼື ຄຳຕັດສິນ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ;
4. ກໍລະນີອື່ນໆ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ພາຍຫຼັງໄດ້ຮັບແຈ້ງການກ່ຽວກັບການຍົກເລີກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງປະກາດກ່ຽວກັບແຈ້ງການດັ່ງກ່າວ ໃຫ້ແກ່ມວນຊົນຊາບ ຜ່ານພາຫະນະສື່ມວນຊົນ ພາຍໃນກຳນົດເວລາຢ່າງໜ້ອຍ ຫ້າວັນ ລັດຖະການຕໍ່ເນື່ອງ ພ້ອມທັງດຳເນີນການສົ່ງເງິນຄືນໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ ພາຍໃນກຳນົດເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການກ່ຽວກັບການຍົກເລີກການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ເປັນຕົ້ນໄປ.

ກໍລະນີ ບໍ່ສາມາດສົ່ງເງິນຄືນໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ ພາຍໃນກຳນົດເວລາດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນ ວັກສອງ ຂອງມາດຕານີ້, ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ແລະ ບໍລິສັດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕ້ອງຮັບຜິດຊອບສົ່ງເງິນຄືນທັງໝົດໃຫ້ແກ່ຜູ້ລົງທຶນທີ່ຈອງຊື້ຮຸ້ນ ພ້ອມດ້ວຍດອກເບ້ຍຕາມ ອັດຕາດອກເບ້ຍເງິນຝາກປະຢັດຂອງທະນາຄານຕົວແທນຂອງ ຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນ ໃນໄລຍະນັ້ນ.

## ມາດຕາ 28 ຂໍ້ຫ້າມ

ຫ້າມ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ, ບໍລິສັດອອກຈຳໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການອອກຈຳໜ່າຍຮຸ້ນໃຫ້

ແກ່ມວນຊົນ ມີພຶດຕິກຳໃດໜຶ່ງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 135 ແລະ 136. ນອກຈາກນັ້ນ ຍັງຫ້າມມີພຶດຕິກຳເພີ່ມເຕີມ ດັ່ງລຸ່ມນີ້:

1. ບຸກຄົນ ຫຼື ນິຕິບຸກຄົນ ຊື້-ຂາຍ ຮຸ້ນທີ່ອອກຈຳໜ່າຍໃນວົງຈຳກັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 30 ຂໍ້ 10 ຂອງລະບຽບສະບັບນີ້.

## ໝວດທີ 3
## ການອອກຈຳໜ່າຍຮຸ້ນໃນວົງຈຳກັດ

**ມາດຕາ 29 ການອອກຈຳໜ່າຍຮຸ້ນໃນວົງຈຳກັດ**

ການອອກຈຳໜ່າຍຮຸ້ນໃນວົງຈຳກັດ ແມ່ນການອອກຈຳໜ່າຍຮຸ້ນ ໃຫ້ແກ່ ຜູ້ລົງທຶນປະເພດສະຖາບັນ ແລະ ບຸກຄົນ ທີ່ມີເງື່ອນໄຂຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງເປັນການອອກຈຳໜ່າຍຮຸ້ນໃຫ້ຜູ້ລົງທຶນ ລວມກັນທັງໝົດ ຈຳນວນແຕ່ ສາມສິບ ຫາ ໜຶ່ງຮ້ອຍ ລາຍ ແລະ ມີມູນຄ່າທຶນທີ່ຕ້ອງການລະດົມລວມກັນທັງໝົດ ບໍ່ເກີນ ໜຶ່ງຮ້ອຍຕື້ກີບ ໃນໄລຍະເວລາໜຶ່ງປີ.

ກໍລະນີ ການລະດົມທຶນດັ່ງກ່າວຫາກມີມູນຄ່າເກີນ ໜຶ່ງຮ້ອຍຕື້ກີບ ໃນໄລຍະເວລາໜຶ່ງປີ ໃຫ້ຖືວ່າເປັນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ.

**ມາດຕາ 30 ເງື່ອນໄຂການອອກຈຳໜ່າຍຮຸ້ນໃນວົງຈຳກັດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃນວົງຈຳກັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບໍລິສັດ ມະຫາຊົນ;
2. ສ້າງຕັ້ງ ແລະ ເຄື່ອນໄຫວມາແລ້ວຢ່າງໜ້ອຍ ໜຶ່ງ ປີ ຍົກເວັ້ນກໍລະນີ ບໍລິສັດ ມີການແຍກ, ຄວບ ຫຼື ທັບ ເປັນ ບໍລິສັດຮູບແບບໃໝ່;
3. ມີສະພາບໍລິຫານ ທີ່ປະກອບດ້ວຍ ສະມາຊິກອິດສະຫຼະຢ່າງໜ້ອຍ ໜຶ່ງສ່ວນສາມ ຂອງຈຳນວນສະມາຊິກສະພາບໍລິຫານທັງໝົດ ທີ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນ;
4. ມີຄະນະກຳມະການກວດກາພາຍໃນ ທີ່ປະກອບດ້ວຍ ສະມາຊິກທັງໝົດຢ່າງໜ້ອຍ ສາມ ທ່ານ ທີ່ໄດ້ຮັບການແຕ່ງຕັ້ງຈາກສະພາບໍລິຫານ ໃນນັ້ນ ສອງສ່ວນສາມ ຕ້ອງເປັນສະມາຊິກອິດສະຫຼະ ຊຶ່ງຢ່າງໜ້ອຍໜຶ່ງທ່ານ ຕ້ອງມີຄວາມຮູ້ຄວາມສາມາດ ທາງດ້ານບັນຊີ ຫຼື ການເງິນ;
5. ມີແຜນການລະດົມທຶນ ແລະ ແຜນການນຳໃຊ້ທຶນທີ່ລະດົມໄດ້ ໂດຍຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ;
6. ມີເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ນັບແຕ່ປີ ຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃນວົງຈຳກັດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ຊຶ່ງເອກະສານລາຍງານການເງິນຕ້ອງໄດ້ຮັບການກວດສອບຈາກບໍລິສັດກວດສອບ;
7. ມີຄວາມສາມາດສ້າງກຳໄລ, ມີຖານະການເງິນທີ່ໝັ້ນຄົງ ແລະ ບໍ່ມີໜີ້ເກີນກຳນົດ;

8. ມີການຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຮຸ້ນໃນວົງຈຳກັດ ຈາກທີ່ປຶກສາດ້ານການເງິນ ພ້ອມດ້ວຍລາຍຊື່ທີມງານທີ່ຮັບຜິດຊອບເປັນທີ່ປຶກສາດ້ານການເງິນ;
9. ມີແຜນການກ່ຽວກັບ ການອອກຈຳໜ່າຍຮຸ້ນໃນວົງຈຳກັດ, ການເຄື່ອນໄຫວທຸລະກິດ ແລະ ການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມປີ ຕໍ່ໜ້າ ນັບແຕ່ປີສຳເລັດການອອກຈຳໜ່າຍຮຸ້ນໃນວົງຈຳກັດ ເປັນຕົ້ນໄປ ໂດຍຜ່ານການຮັບຮອງຈາກສະພາບໍລິຫານ;
10. ຮຸ້ນທີ່ອອກຈຳໜ່າຍໃນວົງຈຳກັດ ບໍ່ສາມາດຊື້-ຂາຍ ພາຍໃນກຳນົດເວລາຢ່າງໜ້ອຍ ຫົກເດືອນ ນັບແຕ່ວັນສິ້ນສຸດການຈຳໜ່າຍຮຸ້ນໃນວົງຈຳກັດ ເປັນຕົ້ນໄປ;
11. ມີເງື່ອນໄຂອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 31 ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃນວົງຈຳກັດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃນວົງຈຳກັດ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄຳຮ້ອງຂໍອອກຈຳໜ່າຍຮຸ້ນໃນວົງຈຳກັດ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາໃບທະບຽນສຳປະທານ ກໍລະນີເປັນທຸລະກິດສຳປະທານ;
3. ສຳເນົາໃບຢັ້ງຢືນປະຈຳຕົວຜູ້ເສຍອາກອນ;
4. ສຳເນົາກົດລະບຽບຂອງບໍລິສັດ;
5. ມະຕິກອງປະຊຸມຜູ້ຖືຮຸ້ນ ທີ່ຮັບຮອງກ່ຽວກັບການອອກຈຳໜ່າຍຮຸ້ນໃນວົງຈຳກັດ;
6. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ໜຶ່ງສ່ວນຮ້ອຍຂຶ້ນໄປ;
7. ລາຍຊື່ ແລະ ຊີວະປະຫວັດຫຍໍ້ຂອງ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະອຳນວຍການ ຂອງ ບໍລິສັດ;
8. ໃບຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຮຸ້ນໃນວົງຈຳກັດ ຈາກ ທີ່ປຶກສາດ້ານການເງິນ;
9. ເອກະສານລາຍງານການເງິນ ໜຶ່ງປີຄືນຫຼັງ ນັບແຕ່ປີຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃນວົງຈຳກັດ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊຶ່ງໄດ້ຮັບການກວດສອບຈາກບໍລິສັດກວດສອບ;
10. ແຜນການກ່ຽວກັບ ການອອກຈຳໜ່າຍຮຸ້ນໃນວົງຈຳກັດ, ການເຄື່ອນໄຫວທຸລະກິດ ແລະ ການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມ ປີຕໍ່ໜ້າ;
11. ໜັງສືຊວນຊື້;
12. ສັນຍາຄໍ້າປະກັນການອອກຈຳໜ່າຍຮຸ້ນໃນວົງຈຳກັດ ລະຫວ່າງ ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃນວົງຈຳກັດ ກັບ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນ (ຖ້າມີ);
13. ເອກະສານອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃນວົງຈຳກັດ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຮ້ອງຂໍອອກຈຳໜ່າຍຮຸ້ນໃນວົງຈຳກັດໃນແຕ່ລະຄັ້ງ, ຕ້ອງຮັບຜິດຊອບຕໍ່ເນື້ອໃນ

ແລະ ຂໍ້ມູນທີ່ບັນທຶກໄວ້ໃນເອກະສານດັ່ງກ່າວ ພ້ອມທັງ ເກັບຮັກສາເອກະສານປະຕິບັດງານ ທີ່ກ່ຽວຂ້ອງດັ່ງກ່າວ ໄວ້ຢ່າງໜ້ອຍ ສິບປີ.

**ມາດຕາ 32 ຄ່າທຳນຽມການອອກຈຳໜ່າຍຮຸ້ນໃນວົງຈຳກັດ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃນວົງຈຳກັດ ຕ້ອງເສຍຄ່າທຳນຽມ ດັ່ງນີ້:

1. ຄ່າຍື່ນຄຳຮ້ອງ ແລະ ເອກະສານປະກອບຮ້ອງຂໍອອກຈຳໜ່າຍຮຸ້ນໃນວົງຈຳກັດ ຈຳນວນ ສິບຫ້າລ້ານກີບ (15.000.000 ກີບ) ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນຄຳຮ້ອງດັ່ງກ່າວ;
2. ຄ່າໃບອະນຸຍາດອອກຈຳໜ່າຍຮຸ້ນໃນວົງຈຳກັດ ຈຳນວນ ສູນຈຸດສູນສອງສ່ວນຮ້ອຍ (0,02%) ຂອງມູນຄ່າຮຸ້ນທີ່ຂໍອອກຈຳໜ່າຍ ແຕ່ບໍ່ໃຫ້ຕໍ່າກວ່າ ສາມສິບລ້ານກີບ (30.000.000 ກີບ) ແລະ ຕ້ອງຊຳລະພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການອອກຈຳໜ່າຍຮຸ້ນໃນວົງຈຳກັດ ເປັນຕົ້ນໄປ;
3. ຄ່າຄຸ້ມຄອງປະຈຳປີ ຈຳນວນ ສິບລ້ານກີບ (10.000.000 ກີບ) ແລະ ຕ້ອງຊຳລະພາຍໃນໄຕມາດທີໜຶ່ງຂອງທຸກໆປີ ຍົກເວັ້ນປີທີ່ອອກຈຳໜ່າຍຮຸ້ນຄັ້ງທຳອິດ.

**ມາດຕາ 33 ຂັ້ນຕອນການອອກຈຳໜ່າຍຮຸ້ນໃນວົງຈຳກັດ**

ພາຍຫຼັງໄດ້ຮັບອະນຸຍາດ ຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃຫ້ອອກຈຳໜ່າຍຮຸ້ນໃນວົງຈຳກັດ ແກ່ເປົ້າໝາຍຜູ້ທີ່ຈະຊື້ຮຸ້ນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ໂຄສະນາອອກຈຳໜ່າຍຮຸ້ນໃນວົງຈຳກັດ;
2. ກຳນົດລາຄາຂອງຮຸ້ນທີ່ຈະອອກຈຳໜ່າຍໃນວົງຈຳກັດ;
3. ຈອງຊື້ຮຸ້ນ ແລະ ວາງເງິນມັດຈຳ;
4. ແບ່ງປັນຮຸ້ນ;
5. ຊຳລະເງິນ;
6. ອອກໃບຢັ້ງຢືນການຖືຄອງຮຸ້ນໃຫ້ແກ່ຜູ້ຊື້ຮຸ້ນ.

ການອອກຈຳໜ່າຍຮຸ້ນໃນວົງຈຳກັດ ຕ້ອງໃຫ້ສຳເລັດພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນເປັນຕົ້ນໄປ. ກໍລະນີ ການອອກຈຳໜ່າຍຮຸ້ນໃນວົງຈຳກັດ ບໍ່ສຳເລັດ ຕາມກຳນົດເວລາດັ່ງກ່າວ ບໍລິສັດອອກຈຳໜ່າຍຮຸ້ນໃນວົງຈຳກັດ ສາມາດສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອເພີ່ມເວລາອອກຈຳໜ່າຍຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນ ສາມສິບວັນ ແລະ ຕ້ອງສະເໜີມາຍັງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງໜ້ອຍ ສາມວັນ ລັດຖະການ ກ່ອນວັນສິ້ນສຸດກຳນົດເວລາດັ່ງກ່າວ.

**ມາດຕາ 34 ການກຳນົດລາຄາຂອງຮຸ້ນທີ່ຈະອອກຈຳໜ່າຍໃນວົງຈຳກັດ**

ບໍລິສັດອອກຈຳໜ່າຍຮຸ້ນໃນວົງຈຳກັດ ຕ້ອງຮ່ວມກັບ ທີ່ປຶກສາທາງດ້ານການເງິນ ດຳເນີນການກຳນົດລາຄາຮຸ້ນທີ່ຈະອອກຈຳໜ່າຍໃນວົງຈຳກັດ ໃຫ້ເປົ້າໝາຍຜູ້ທີ່ຈະຊື້ຮຸ້ນ.

ການກຳນົດລາຄາຮຸ້ນທີ່ຈະອອກຈຳໜ່າຍໃນວົງຈຳກັດ ຕ້ອງບໍ່ຕໍ່າກວ່າ ເກົ້າສິບສ່ວນຮ້ອຍ ຂອງລາຄາໃດໜຶ່ງ ລຸ່ມນີ້:

1. ລາຄາປິດສະເລ່ຍຂອງຮຸ້ນ ຂອງບໍລິສັດ ຍ້ອນຫຼັງບໍ່ຕໍ່າກວ່າ ເຈັດວັນ ລັດຖະການ ແລະ ບໍ່ເກີນສິບຫ້າວັນ ລັດຖະການ ຕໍ່ເນື່ອງ ກ່ອນວັນກຳນົດລາຄາຮຸ້ນທີ່ຈະອອກຈຳໜ່າຍ ກໍລະນີ ເປັນບໍລິສັດຈົດທະບຽນ;
2. ລາຄາຮຸ້ນແບບຄົງທີ່ ຫຼື ລາຄາຮຸ້ນທີ່ກຳນົດແບບການດຳເນີນການສຳຫຼວດຄວາມຕ້ອງການຊື້ຮຸ້ນ ຫຼື ວິທີອື່ນ ທີ່ໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 35 ການນຳໃຊ້ບົດບັນຍັດຂອງການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສຳລັບການອອກຈຳໜ່າຍຮຸ້ນໃນວົງຈຳກັດ**

ນອກຈາກບົດບັນຍັດຕ່າງໆ ທີ່ໄດ້ກຳນົດໄວ້ໃນໝວດນີ້ ເອກະສານລາຍງານການເງິນ, ໜັງສືຊວນຊື້, ສັນຍາຄໍ້າປະກັນການອອກຈຳໜ່າຍຮຸ້ນ, ການພິຈາລະນາການຂໍອອກຈຳໜ່າຍຮຸ້ນ, ການລາຍງານຜົນການອອກຈຳໜ່າຍຮຸ້ນ, ການນຳໃຊ້ທຶນທີ່ລະດົມໄດ້, ການລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້, ການໂຈະ, ການຍົກເລີກ ການອອກຈຳໜ່າຍຮຸ້ນ ແລະ ຂໍ້ຫ້າມ ກ່ຽວກັບການອອກຈຳໜ່າຍຮຸ້ນໃນວົງຈຳກັດ ໃຫ້ປະຕິບັດຕາມບົດບັນຍັດຂອງ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ທີ່ໄດ້ກຳນົດໄວ້ໃນ ໝວດທີ 2 ຂອງລະບຽບສະບັບນີ້.

## ໝວດທີ 4
## ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ

**ມາດຕາ 36 ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ**

ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແມ່ນການອອກຈຳໜ່າຍຮຸ້ນ ຂອງບໍລິສັດອອກຈຳໜ່າຍຮຸ້ນ ຫຼື ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ໂດຍການໃຫ້ບູລິມະສິດແກ່ຜູ້ຖືຮຸ້ນເດີມ ໃນການຊື້ຮຸ້ນຂອງບໍລິສັດໃນອັດຕາສ່ວນ ແລະ ວິທີການແບ່ງປັນ ຕາມມະຕິຂອງກອງປະຊຸມຜູ້ຖືຮຸ້ນ.

**ມາດຕາ 37 ເງື່ອນໄຂການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ**

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີແຜນການລະດົມທຶນ ແລະ ແຜນການນຳໃຊ້ທຶນທີ່ລະດົມໄດ້ ໂດຍຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ;
2. ມີການຢັ້ງຢືນຄວາມພ້ອມ ການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈາກທີ່ປຶກສາດ້ານການເງິນ ພ້ອມດ້ວຍລາຍຊື່ທີມງານທີ່ຮັບຜິດຊອບເປັນທີ່ປຶກສາດ້ານການເງິນ;
3. ມີການຄໍ້າປະກັນການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ລະຫວ່າງ ບໍລິສັດອອກທີ່ມີຈຸດປະສົງຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ກັບ ຜູ້ຄໍ້າປະກັນການອອກຈຳໜ່າຍຮຸ້ນ;

4. ມີແຜນການກ່ຽວກັບ ການອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ, ການເຄື່ອນໄຫວທຸລະກິດ ແລະ ການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມປີ ຕໍ່ໜ້າ ນັບແຕ່ປີສໍາເລັດການອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ເປັນຕົ້ນໄປ ໂດຍຜ່ານການຮັບຮອງຈາກສະພາບໍລິຫານ;
5. ມີເງື່ອນໄຂອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**ມາດຕາ 38 ເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕ້ອງຍື່ນຄໍາຮ້ອງ ແລະ ເອກະສານປະກອບ ຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄໍາຮ້ອງຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕາມແບບພິມຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
2. ມະຕິກອງປະຊຸມຜູ້ຖືຮຸ້ນ ທີ່ຮັບຮອງກ່ຽວກັບ ການອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ;
3. ບັນຊີລາຍຊື່ຜູ້ຖືຮຸ້ນ ແຕ່ໜຶ່ງສ່ວນຮ້ອຍຂຶ້ນໄປ;
4. ໃບຢັ້ງຢືນຄວາມພ້ອມ ການອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈາກ ທີ່ປຶກສາດ້ານການເງິນ;
5. ແຜນການກ່ຽວກັບ ການອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ, ການເຄື່ອນໄຫວທຸລະກິດແລະການຄາດຄະເນຖານະການເງິນ ຢ່າງໜ້ອຍ ສາມປີ ຕໍ່ໜ້າ;
6. ໜັງສືຊວນຊື້;
7. ສັນຍາຄໍ້າປະກັນການອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ລະຫວ່າງ ບໍລິສັດອອກທີ່ມີຈຸດປະສົງຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ກັບ ຜູ້ຄໍ້າປະກັນການອອກຈໍາໜ່າຍຮຸ້ນ;
8. ເອກະສານອື່ນຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕ້ອງຮ່ວມກັບ ທີ່ປຶກສາດ້ານການເງິນ ເປັນຜູ້ກະກຽມເອກະສານປະກອບການຮ້ອງຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມໃນແຕ່ລະຄັ້ງ, ຕ້ອງຮັບຜິດຊອບຕໍ່ເນື້ອໃນ ແລະ ຂໍ້ມູນທີ່ບົ່ງໄວ້ໃນເອກະສານດັ່ງກ່າວ ພ້ອມທັງ ເກັບຮັກສາເອກະສານປະຕິບັດງານ ທີ່ກ່ຽວ ຂ້ອງດັ່ງກ່າວ ໄວ້ຢ່າງໜ້ອຍ ສິບປີ.

**ມາດຕາ 39 ຄ່າທໍານຽມການອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ**

ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຕ້ອງເສຍຄ່າທໍານຽມ ດັ່ງນີ້:

1. ຄ່າຍື່ນຄໍາຮ້ອງຂໍອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈໍານວນ ສິບຫ້າລ້ານກີບ (15.000.000 ກີບ) ແລະ ຕ້ອງຊໍາລະເງິນພາຍໃນວັນທີ່ໄດ້ຍື່ນຄໍາຮ້ອງດັ່ງກ່າວ;
2. ຄ່າໃບອະນຸຍາດອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ຈໍານວນ ສູນຈຸດສູນສອງສ່ວນຮ້ອຍ (0,02%) ຂອງມູນຄ່າຮຸ້ນທີ່ຂໍອອກຈໍາໜ່າຍ ແຕ່ບໍ່ໃຫ້ຕໍ່າກວ່າ ສາມສິບລ້ານກີບ (30.000.000 ກີບ) ແລະ ຕ້ອງຊໍາລະພາຍໃນກໍານົດເວລາ ສາມສິບວັນ ນັບແຕ່ວັນສິ້ນສຸດການອອກຈໍາໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ເປັນຕົ້ນໄປ;
3. ຄ່າຄຸ້ມຄອງປະຈໍາປີ ຈໍານວນ ສິບລ້ານກີບ (10.000.000 ກີບ) ແລະ ຕ້ອງຊໍາລະພາຍໃນໄຕມາດທີໜຶ່ງຂອງທຸກໆປີ ຍົກເວັ້ນປີທີ່ອອກຈໍາໜ່າຍຮຸ້ນຄັ້ງທໍາອິດ.

ມາດຕາ 40 ການນຳໃຊ້ບົດບັນຍັດຂອງການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ສຳລັບການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ

ນອກຈາກບົດບັນຍັດຕ່າງໆ ທີ່ໄດ້ກຳນົດໄວ້ໃນໝວດນີ້ ໜັງສືຊວນຊື້, ສັນຍາຄ້ຳປະກັນການອອກຈຳໜ່າຍຮຸ້ນ, ການພິຈາລະນາການຂໍອອກຈຳໜ່າຍຮຸ້ນ, ຂັ້ນຕອນການອອກຈຳໜ່າຍຮຸ້ນ, ການລາຍງານຜົນການອອກຈຳໜ່າຍຮຸ້ນ, ການນຳໃຊ້ທຶນທີ່ລະດົມໄດ້, ການລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້, ການໂຈະ, ການຍົກເລີກ ການອອກຈຳໜ່າຍຮຸ້ນ ແລະ ຂໍ້ຫ້າມ ກ່ຽວກັບການອອກຈຳໜ່າຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ໃຫ້ປະຕິບັດຕາມບົດບັນຍັດຂອງ ການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນ ໝວດທີ 2 ຂອງລະບຽບສະບັບນີ້.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 41 ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ, ບໍລິສັດອອກຈຳໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ມີສ່ວນຮ່ວມໃນການອອກຈຳໜ່າຍຮຸ້ນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ແລະ ໄດ້ປະກອບສ່ວນໃດໜຶ່ງທີ່ມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

ມາດຕາ 42 ມາດຕະການຕໍ່ຜູ້ລະເມີດ

ບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ, ບໍລິສັດອອກຈຳໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ມີສ່ວນຮ່ວມໃນການອອກຈຳໜ່າຍຮຸ້ນ ທີ່ລະເມີດລະບຽບສະບັບນີ້ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 166, 167, 168, 169 ແລະ 170 ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ກໍລະນີ ຜູ້ທີ່ລະເມີດຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 28 ຂໍ້ 1 ຕາມທີ່ໄດ້ກຳນົດໄວ້ໃນລະບຽບສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ບຸກຄົນ ຫຼື ນິຕິບຸກຄົນ ຊື້-ຂາຍ ຮຸ້ນທີ່ອອກຈຳໜ່າຍໃນວົງຈຳກັດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 30 ຂໍ້ 10 ຂອງລະບຽບສະບັບນີ້ ຈະຖືກປັບໃໝ ໜຶ່ງເທົ່າ ຂອງຈຳນວນເງິນກຳໄລທີ່ໄດ້ຈາກການ ຊື້-ຂາຍ ໃນກໍລະນີບໍ່ມີກຳໄລ ຈະຖືກປັບໃໝ ແຕ່ ໜຶ່ງລ້ານກີບ ຫາ ສາມລ້ານກີບ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 43 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນ, ບໍລິສັດອອກຈໍາໜ່າຍຮຸ້ນ, ບໍລິສັດຫຼັກຊັບ, ບໍລິສັດກວດສອບ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ມີສ່ວນຮ່ວມໃນການອອກຈໍາໜ່າຍຮຸ້ນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 44 ຜົນສັກສິດ**

ລະບຽບສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍລະບຽບກ່ຽວກັບການອອກ ແລະ ສະເໜີຂາຍຮຸ້ນຕໍ່ມວນຊົນ ສະບັບເລກທີ 008/ຄລຕ, ລົງວັນທີ 21 ກໍລະກົດ 2010.

ລະບຽບສະບັບ ນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ຂໍ້ກໍານົດ ແລະ ບົດບັນຍັດໃດທີ່ຂັດກັບລະບຽບສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ**

ດຣ.ບຸນປອນ ບຸດຕະນະວົງ